# 10 ຄວາມຈິງສຳລັບຄົນອາວຸໂສ (60 ປີ ຫລື ກາຍນັ້ນ) ແລະ ບຸກຄົນຜູ້ທີ່ມີຄວາມເສັຽອົງຄະກ່ຽວກັບໂຄງການ **Basic Food**

**ຄວາມຈິງ #1:** ຖ້າຫາກວ່າທ່ານເປັນຄົນອາວຸໂສ, 60 ປີ ຫລື ກາຍນັ້ນ, ທ່ານຈະມີເງື່ອນໄຂໄດ້ຮັບໂຄງການ Basic Food ເຖິງແມ່ນວ່າທ່ານຈະເຮັດວຽກ ຫລື ອອກກິນເບັ້ຽບຳນານ, ກຳລັງໄດ້ຮັບເງິນຄວາມປອດພັຍຂອງສັງຄົມ ຫລື ມີຣາຍໄດແນວອື່ນຢູ່ກໍຕາມ.

**ຄວາມຈິງ #2:** Basic Food ແມ່ນໂຄງການຊ່ວຍເຫລືອອາຫານການກິນ; ມັນຊ່ວຍບຸກຄົນຜູ້ທີ່ສອດຄ່ອງນຳຂອບເຂດຣາຍໄດ້ໃຫ້ຊື້ເອົາອາຫານທີ່ມີພະລານາມັຍ.

**ຄວາມຈິງ #3:** ຖ້າຫາກວ່າທ່ານມີອາຍຸຢ່າງຫນ້ອຍ 60 ປີ ຫລື ເສັຽອົງຄະ, ແລະ ບໍ່ມີຣາຍໄດ້ທີ່ເຮັດວຽກເອົາ, ທ່ານອາດຈະມີສິດໄດ້ຮັບການດຳເນີນການແບບງ່າຍໆທີ່ຈະອະນຸມັດການຊ່ວຍເຫລືອຂອງທ່ານເປັນເວລາເຖິງ 24 ເດືອນ. ການສຳພາດຂອງທ່ານຍັງຈະຖືກຍົກເວັ້ນອີກເມື່ອເວລາທ່ານຕໍ່ອະນຸມັດໃຫມ່.

**ຄວາມຈິງ #4:** ບາງຄົນຄິດວ່າຖ້າຫາກວ່າທ່ານມີຣົດ ຫລື ເງິນຢູ່ໃນທະນາຄານແລ້ວທ່ານບໍ່ສາມາດມີສິດໄດ້ຮັບ Basic Food. ກົມ DSHS ຈະຕັດສິນເງື່ອນໄຂຮັບເອົາຂອງທ່ານອີງຕາມຣາຍໄດ້ ແລະ, ໃນເມື່ອພວກເຮົາອາດຈະຖາມກ່ຽວກັບຊັບສິນ, ອັນນີ້ຕາມປົກກະຕິແລ້ວຈະບໍ່ຖືກໃຊ້ເພື່ອຈະຕັດສິນວ່າທ່ານຈະມີເງື່ອນໄຂໄດ້ຮັບ ຫລື ບໍ່.



**ຄວາມຈິງ #5:** Basic Food ໃນດຽວນີ້ຈະຖືກເອົາໃຫ້ໃສ່ໃນບັດໂອນການຊ່ວຍເຫລືອທາງເອເລກໂຕຣນິກ, ຫລື ບັດ EBT. ບັດ EBT ຈະຄ້າຍຄືກັບບັດເດບິດຄາດ ແລະ ສາມາດຖືກໃຊ້ໄດ້ໃນຮ້ານຄ້າຂາຍເຄື່ອງກິນເກືອບຫມົດທຸກບ່ອນ.

**ຄວາມຈິງ #6:** ການຊ່ວຍເຫລືອ Basic Food ທີ່ບໍ່ທັນຖືກໃຊ້ເທື່ອຈະເລື່ອນຕໍ່ໄປ. ອັນນີ້ຫມາຍຄວາມວ່າຖ້າຫາກວ່າທ່ານບໍ່ໃຊ້ການຊ່ວຍເຫລືອຂອງທ່ານຫມົດໃນເດືອນນຶ່ງ, ມັນຈະເລື່ອນຕໍ່ໄປຫາເດືອນຫນ້າເພື່ອຈະໃຫ້ທ່ານໃຊ້.

**ຄວາມຈິງ #7:** ທ່ານສາມາດບົ່ງຊື່ຄົນໃດຄົນນຶ່ງໃຫ້ໃຊ້ບັດ EBT ຂອງທ່ານໃນນາມຂອງທ່ານຖ້າຫາກວ່າທ່ານບໍ່ສາມາດອອກຈາກເຮືອນໄດ້ເພື່ອຈະອອກຕະລາດຊື້ຂອງກິນ.

**ຄວາມຈິງ #8:** ທ່ານສາມາດໃຊ້ການຊ່ວຍເຫລືອ Basic Food EBT ຢູ່ຕາມຕະລາດ farmers markets ໄດ້. ທ່ານຍັງສາມາດໃຊ້ການຊ່ວຍເຫລືອ EBT ຂອງທ່ານໄດ້ອີກຄືກັນເພື່ອຈະຊື້ເອົາພືນລະປູກ ແລະ ແກ່ນໃນທີ່ຜະລິດອາຫານ.

**ຄວາມຈິງ #9:** ຖ້າຫາກວ່າທ່ານມີສິດໄດ້ຮັບອາຫານຈຳເປັນ, ທ່ານຍັງຈະມີສິດໄດ້ຮັບການບໍຣິການແນວອື່ນໆອີກເຊັ່ນວ່າການບໍຣິການໂທຣະສັບໃນຣາຄາລູດຜ່ອນຈາກການຊ່ວຍເຫລືອໂທຣະສັບມືຖືຟຣີຂອງ Lifeline ຫລື ບັດຂີ່ຣົດໂດຍສານ ORCA ໃນຣາຄາລູດຜ່ອນຂອງຄິງຄາວຕືອີກ.

**ຄວາມຈິງ #10:** ການສະມັກຂໍເອົາ Basic Food ແມ່ນງ່າຍໆ! ທ່ານສາມາດສະມັກຂໍເອົາການຊ່ວຍເຫລືອ Basic Food:

**1)** ທາງອອນລາຍນ໌ໄດ້ທີ່ www.WashingtonConnection.org;

**2)** ດ້ວຍໃບຄຳຮ້ອງຂໍທາງແຟກຊ໌ ຫລື ໄປສະນີ;
ແຟກຊ໌: 1-888-338-7410
ທີ່ຢູ່ໄປສະນີ:
DSHS Customer Service Center
PO Box 11699
Tacoma, WA 98411-6699

**3)** ຫລື ໂດຍຕົນເອງຢູ່ຕາມຫ້ອງການບໍຣິການຊຸມນຸມຊົນທ້ອງຖິ່ນ. ເພື່ອຈະຊອກຫາຫ້ອງການ CSO ໄກ້ທີ່ສຸດ, ໄປທີ່ https://www.dshs.wa.gov/office-locations.

ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບອາຫານຈຳເປັນ, ແລະ ເພື່ອຈະຮ້ອງການເອົາ, **ຈົ່ງໂທຫາ 877-501-2233**.

*ສະຖາບັນແຫ່ງນີ້ແມ່ນບ່ອນບໍຣິການທີ່ໃຫ້ໂອກາດເທົ່າທຽມກັນ.*

Take a Fresh Look
Basic Food

Washington State Department of Social & Health Services
*Transforming lives*

ເພື່ອຄວາມຊ່ວຍເຫລືອນຳການຮ້ອງຂໍເອົາ
**Basic Food** ຕິດຕໍ່ໄປທີ່:

_______________________

DSHS 22-1610 LA (Rev. 9/20) Laotian